**ຈົດໝາຍສະບັບທີສອງ ຂອງ**

The Second Letter of

# ໂຢຮັນ

## JOHN

Salutation

1 ຈາກ ຂ້າພະເຈົ້າຜູ້ເຖົ້າແກ່
ຮຽນ ທ່ານຍິງທີ່ຊົງເລືອກໄວ້ກັບບັນດາລູກຂອງທ່ານ ຊຶ່ງຂ້າພະເຈົ້າຮັກເນື່ອງດ້ວຍຄວາມຈິງ ບໍ່ແມ່ນແຕ່ຂ້າພະ
ເຈົ້າຜູ້ດຽວ ແຕ່ຄົນທັງປວງທີ່ຮູ້ຈັກຄວາມຈິງກໍຮັກເໝືອນກັນ
2 ຍ້ອນຄວາມຈິງທີ່ຕັ້ງຢູ່ໃນເຮົາທັງຫລາຍ ແລະຊຶ່ງຈະດຳຣົງຢູ່ກັບພວກເຮົາສືບໆໄປເປັນນິດ
3 ພຣະຄຸນ, ພຣະເມດຕາ, ແລະສັນຕິສຸກທີ່ມາຈາກພຣະເຈົ້າພຣະບິດາ ແລະຈາກພຣະເຢຊູຄຣິດພຣະບຸດຂອງ
ພຣະບິດານັ້ນ ຈະສະຖິດຢູ່ກັບພວກເຮົາທັງຫລາຍໃນຄວາມຈິງແລະໃນຄວາມຮັກ

The Truth and Love

4 ຂ້າພະເຈົ້າໄດ້ມີຄວາມຍິນດີຫລວງຫລາຍ ເພາະໄດ້ພົບລູກຂອງທ່ານລາງຄົນດຳເນີນຊີວິດຕາມຄວາມຈິງ
ຕາມທີ່ເຮົາທັງຫລາຍໄດ້ຮັບຂໍ້ບັນຍັດຈາກພຣະບິດາ
5 ທ່ານຍິງເອີຍ, ຂ້າພະເຈົ້າຂໍເຊີນທ່ານໃຫ້ເຮົາທັງຫລາຍຮັກເຊິ່ງກັນແລະກັນ ບໍ່ແມ່ນເໝືອນກັບວ່າເຮົາໄດ້ຂຽນຂໍ້
ບັນຍັດໃຫມ່ມາຍັງທ່ານ ແຕ່ເປັນຂໍ້ບັນຍັດທີ່ທ່ານທັງຫລາຍໄດ້ມີມາແລ້ວຕັ້ງແຕ່ເດີມ
6 ນີ້ແຫລະ, ເປັນຄວາມຮັກ ຄືໃຫ້ເຮົາທັງຫລາຍປະຕິບັດຕາມບັນດາຂໍ້ບັນຍັດຂອງພຣະອົງ ນີ້ແຫລະ, ເປັນຂໍ້ບັນ
ຍັດທີ່ທ່ານທັງຫລາຍໄດ້ຍິນໄດ້ຟັງຕັ້ງແຕ່ຕົ້ນເດີມນັ້ນ ເພື່ອພວກທ່ານຈະໄດ້ປະຕິບັດຕາມ
7 ເພາະວ່າມີຜູ້ຫລອກລວງເປັນຈຳນວນຫລາຍໄດ້ອອກໄປໃນໂລກ ຄົນເຫລົ່ານີ້ບໍ່ຍອມຮັບວ່າພຣະເຢຊູຄຣິດໄດ້
ສະເດັດລົງມາຮັບຊາດເປັນມະນຸດ ຄົນນັ້ນແຫລະ, ເປັນຜູ້ຫລອກລວງແລະເປັນຜູ້ຕໍ່ສູ້ພຣະຄຣິດ
8 ທ່ານທັງຫລາຍຈິ່ງລະວັງຕົວໃຫ້ດີ ເພື່ອພວກທ່ານຈະບໍ່ເສັຽຜົນປໂຍດໃນການເຮັດຂອງຕົນ ແຕ່ເພື່ອພວກທ່ານ
ຈະໄດ້ຮັບບຳເຫນັດເຕັມສ່ວນ
9 ຜູ້ໃດລ່ວງເກີນແລະບໍ່ດຳຣົງຢູ່ໃນພຣະໂອວາດຂອງພຣະຄຣິດຜູ້ນັ້ນກໍບໍ່ມີພຣະເຈົ້າ ຜູ້ໃດດຳຣົງຢູ່ໃນພຣະໂອ
ວາດນີ້ ຜູ້ນັ້ນແຫລະ, ທັງມີພຣະບິດາແລະມີພຣະບຸດ
10 ຖ້າຜູ້ໃດມາຫາພວກທ່ານແລະບໍ່ນັບຖືພຣະໂອວາດນີ້ມານຳ ຢ່າຮັບຜູ້ນັ້ນໄວ້ໃນເຮືອນ ແລະຢ່າສະແດງຄວາມ
ຄຳນັບຕໍ່ຜູ້ນັ້ນ
11 ເພາະວ່າຜູ້ທີ່ສະແດງຄວາມຄຳນັບຕໍ່ເຂົາ ກໍເຂົ້າສ່ວນໃນການຊົ່ວຂອງເຂົາ

**ຄຳສະແດງຄວາມນັບຖືຕອນທ້າຍ**

Final Greeting

12 ຂ້າພະເຈົ້າຍັງມີຂໍ້ຄວາມອີກຫລາຍຂໍ້ທີ່ຈະຂຽນເຖິງທ່ານທັງຫລາຍ ແຕ່ກໍບໍ່ຢາກໃຊ້ເຈັ້ຽແລະນ້ຳຫມຶກຂຽນ ແຕ່
ຂ້າພະເຈົ້າຫວັງວ່າຈະມາຫາພວກທ່ານແລະສົນທະນາກັນປາກຕໍ່ປາກ ເພື່ອຄວາມຍິນດີຂອງພວກເຮົາຈະໄດ້
ຄົບເຕັມ
13 ບັນດາລູກນ້ອງສາວຂອງທ່ານທີ່ຊົງເລືອກໄວ້ນັ້ນ ກໍຝາກຄວາມຄິດເຖິງມາຍັງທ່ານ